ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ຫ້ອງການ

ເລກທີ: 47 /ທກ

ນະຄອນຫຼວງວຽງຈັນ, ວັນທີ: 17 ຕຸລາ 2017

ສຳນັກງານ ຄຄຊ
ສາຍເລກ ...1160...
ວັນທີ 19 OCT 2017
ໂທລະສັບ 021 217770

ລາຍງານການເຄື່ອນໄຫວຂອງທະນາຄານແຫ່ງ ສປປ ລາວ

ປະຈຳອາທິດ ທີ 02-06/10/2017 ແລະ ແຜນການເຄື່ອນໄຫວໃນອາທິດຕໍ່ໄປ

I. ວຽກງານການເມືອງແນວຄິດ

ສະພາບການເມືອງແນວຄິດຂອງພະນັກງານພາຍໃນຂະແໜງທະນາຄານມີຄວາມສະຫງົບປົກກະຕິ. ພະນັກງານມີຄວາມອຸ່ນອ່ຽນໝັ້ນທ່ຽງ, ເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດ, ມີສະຕິເຄົາລົບຕໍ່ການຈັດຕັ້ງ, ລະບຽບກົດໝາຍ ແລະ ຕັ້ງໜ້າປະຕິບັດໜ້າທີ່ວຽກງານຕາມທີ່ໄດ້ຮັບມອບໝາຍຢ່າງຕັ້ງໜ້າ. ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ.

II. ການເຄື່ອນໄຫວວຽກງານວິຊາສະເພາະ

1. ສະພາບເສດຖະກິດເງິນຕາສາກົນ

1.1 ອັດຕາແລກປ່ຽນສາກົນ

ອັດຕາແລກປ່ຽນຢູ່ຕະຫຼາດສາກົນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາສະຫະລັດແຂງຄ່າຂຶ້ນ 0.76% ທຽບເອີໂຣ ເນື່ອງຈາກຕົວເລກເສດຖະກິດຂອງສະຫະລັດອາເມລິກາ ອອກມາດີ ເປັນຕົ້ນແມ່ນຕົວເລກດັດຊະນີພາກອຸດສາຫະກຳໂຮງງານເພີ່ມຂຶ້ນເປັນ 60.8 ຈຸດ ຂອງເດືອນ 09/2017 ຈາກ 58.8 ຈຸດ ໃນເດືອນຜ່ານມາ ແລະ ຕົວເລກການສັ່ງຊື້ສິນຄ້າຂອງໂຮງງານ ເພີ່ມຂຶ້ນ 1.20% ຂອງເດືອນ 08/2017 ຈາກຫຼຸດລົງ 3.30% ໃນເດືອນຜ່ານມາ.

| ສະກຸນເງິນຕ່າງໆທຽບກັບໂດລາ | ອາທິດຜ່ານມາ<br>25-29/09/2017 | ອາທິດນີ້<br>02-06/10/2017 | ເປີເຊັນ ແຂງຄ່າ(+) / ອ່ອນຄ່າ(–) |
|---|---|---|---|
| ໂດລາ/ເອີໂຣ | 1.1799 | 1.1710 | 0.76% |
| ເຢນ/ໂດລາ | 112.49 | 112.84 | -0.31% |
| ບາດ/ໂດລາ | 33.32 | 33.42 | -0.30% |
| ເຟໂຊ/ໂດລາ | 50.80 | 51.09 | -0.56% |
| ຣູເປັຍ/ໂດລາ | 13.470 | 13.485 | -0.11% |
| ໂດລາສິງກະໂປ/ໂດລາ | 1.3579 | 1.3655 | -0.56% |
| ຢວນ/ໂດລາ | 6.6510 | 6.6533 | -0.03% |

1.2 ສະພາບລາຄານ້ຳມັນ ແລະ ຄຳໃນຕະຫຼາດໂລກ

- ລາຄານ້ຳມັນ ຫຼຸດລົງ 1.17% ຈາກ 52.29 ໂດລາ ບາເຣວ ມາເປັນ 51.68 ໂດລາ ບາເຣວ ເນື່ອງຈາກຄັງສຳຮອງນ້ຳມັນແອັດສົງຂອງສະຫະລັດອາເມລິກາໃນອາທິດນີ້ເພີ່ມຂຶ້ນເຖິງ 1.64 ລ້ານບາເຣວ.

- ສຳລັບລາຄາຄຳ ຫຼຸດລົງ 1.47% ຈາກ 1.288.00 ໂດລາ ອອນ ມາເປັນ 1.269.05 ໂດລາ ອອນ ເນື່ອງຈາກກອງທຶນ SPDR ເທຂາຍຄຳ ແລະ ສັນຍາ ຊື້-ຂາຍຄຳ ເພື່ອເອົາກຳໄລ.

2. ສະພາບເສດຖະກິດເງິນຕາພາຍໃນ

2.1 ສະພາບອັດຕາແລກປ່ຽນພາຍໃນ

ສະພາບອັດຕາແລກປ່ຽນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເງິນກີບທຽບໃສ່ເງິນໂດລາ ອ່ອນຄ່າລົງ 0.21% ແລະ ອ່ອນຄ່າລົງ 0.51% ເມື່ອທຽບໃສ່ສະກຸນເງິນບາດ. ທຽບໃສ່ທ້າຍປີຜ່ານມາເຫັນວ່າ ເງິນກີບອ່ອນຄ່າລົງ 0.71% ທຽບໃສ່ສະກຸນເງິນໂດລາ ແລະ ອ່ອນຄ່າລົງ 7.40% ທຽບໃສ່ສະກຸນເງິນບາດ.

| ອັດຕາ | ອາທິດຜ່ານມາ 25-29/09/2017 | | | ອາທິດນີ້ 02-06/10/2017 | | | %ທຽບອາທິດຜ່ານມາ | | | ທຽບທ້າຍປີຜ່ານມາ | | |
|---|---|---|---|---|---|---|---|---|---|---|---|---|
| | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ |
| ອັດຕາທະນາຄານ[1] | | | | | | | | | | | | |
| ໂດລາ | 8.360,66 | 8.390,21 | 8.377,22 | 8.384,77 | 8.402,90 | 8.395,06 | -0,29% | -0,15% | -0,21% | -0,81% | -0,58% | -0,71% |
| ບາດ | 251,37 | 252,78 | 252,04 | 252,82 | 254,03 | 253,33 | -0,57% | -0,49% | -0,51% | -7,60% | -7,45% | -7,40% |

2.2 ສະພາບຖານເງິນຕາ ແລະ ປະລິມານເງິນ M2

- ຖານເງິນຕາປະຈຳອາທິດນີ້ ຫຼຸດລົງ 0.71% ເມື່ອທຽບໃສ່ອາທິດຜ່ານມາ. ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາເພີ່ມຂຶ້ນ 18.39%;
- ປະລິມານເງິນ M2 ຫຼຸດລົງ 1.00% ເມື່ອທຽບໃສ່ອາທິດຜ່ານມາ. ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາເພີ່ມຂຶ້ນ 11.92%.

2.3 ການຊື້-ຂາຍເງິນຕາ (ເງິນໂດລາ ແລະ ເງິນບາດ) ຂອງທົ່ວລະບົບທະນາຄານທຸລະກິດ

- ການຊື້-ຂາຍເງິນຕາຕ່າງປະເທດ (ເງິນໂດລາ ແລະ ເງິນບາດ) ຂອງບັນດາທະນາຄານທຸລະກິດກັບລູກຄ້າພາຍໃນປະຈຳອາທິດ (29/09/-05/10/2017) ເຫັນວ່າ ທທກ ຊື້ໂດລາສຸດທິ 0.15 ລ້ານໂດລາ (ໃນນີ້ ຊື້ໂດລາໄດ້ 33.08 ລ້ານໂດລາ ແລະ ຂາຍໂດລາໄດ້ 32.93 ລ້ານໂດລາ) ແລະ ຂາຍເງິນບາດສຸດທິ 167.14 ລ້ານບາດ (ໃນນີ້ ຊື້ບາດໄດ້ 275.10 ລ້ານບາດ ແລະ ຂາຍບາດໄດ້ 442.24 ລ້ານບາດ); ມູນຄ່າການຊື້-ຂາຍເງິນໂດລາ ແລະ ເງິນບາດເມື່ອທຽບໃສ່ອາທິດຜ່ານມາເຫັນວ່າ ເງິນໂດລາເພີ່ມຂຶ້ນ 10.64% ແຕ່ ເງິນບາດຫຼຸດລົງ 12.15%.
- ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ ເຫັນວ່າ: ທຫລ ຂາຍເງິນໂດລາສຸດທິ ຈຳນວນ 9.32 ລ້ານໂດລາ ແລະ ຂາຍເງິນບາດສຸດທິ ຈຳນວນ 50.70 ລ້ານບາດ;
- ການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນເຫັນວ່າ: ມີປະລິມານຊື້-ຂາຍເງິນໂດລາ ຈຳນວນ 1.30 ລ້ານໂດລາສະຫະລັດ ແລະ ເງິນບາດ ຈຳນວນ 50.99 ລ້ານບາດ;
- ການຊື້-ຂາຍລະຫວ່າງ ທຫລ ກັບ ພາກສ່ວນອື່ນໆ ເຫັນວ່າ: ທຫລ ຊື້ເງິນໂດລາ ຈຳນວນ 0.20 ລ້ານໂດລາສະຫະລັດ ແຕ່ເງິນບາດບໍ່ມີການເຄື່ອນໄຫວ.

1 [illegible]

ສະພາບການ ຊື້-ຂາຍເງິນຕາຕ່າງປະເທດ (ຫົວໜ່ວຍ: ລ້ານ)

| | ອາທິດທີ່ຜ່ານມາ 22-28/09/2017 | | ອາທິດນີ້ 29/09/-05/10/2017 | | (%) +ເພີ່ມຂຶ້ນ /-ຫຼຸດລົງ | |
|---|---|---|---|---|---|---|
| | ໂດລາ | ບາດ | ໂດລາ | ບາດ | ໂດລາ | ບາດ |
| **1. ການຊື້ເງິນຕາຕ່າງປະເທດ** | **27,14** | **330,01** | **33,08** | **275,10** | **21,89%** | **-16,64%** |
| - ທ/ຄທຸລະກິດລັດ | 10,15 | 45,31 | 16,81 | 184,41 | 65,62% | 307,00% |
| - ທ/ຄທຸລະກິດອື່ນໆ | 16,99 | 284,70 | 16,27 | 90,69 | -4,24% | -68,15% |
| **2. ການຂາຍເງິນຕາຕ່າງປະເທດ** | **32,52** | **486,56** | **32,93** | **442,24** | **1,26%** | **-9,11%** |
| - ທ/ຄທຸລະກິດລັດ | 12,35 | 102,54 | 21,31 | 106,35 | 72,55% | 3,72% |
| - ທ/ຄທຸລະກິດອື່ນໆ | 20,17 | 384,02 | 11,62 | 335,89 | -42,39% | -12,53% |
| ຊື້-ຂາຍສຸດທິ ທທກ | **-5,38** | **-156,55** | **0,15** | **-167,14** | **-102,79%** | **6,76%** |
| - ຜິດດ່ຽງ ຊື້-ຂາຍ | -19,82% | -47,44% | 0,45% | -60,76% | -102,27% | 28,08% |
| - ມູນຄ່າການຊື້-ຂາຍ | **59,66** | **816,57** | **66,01** | **717,34** | **10,64%** | **-12,15%** |
| 3. ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ | -11,45 | -110,00 | -9,32 | -50,70 | | |
| - ທຫລ ຊື້ຈາກ ທທກ | 0,00 | 0,00 | 0,00 | 40,00 | | |
| - ທຫລ ຂາຍໃຫ້ ທທກ | 11,45 | 110,00 | 9,32 | 90,70 | | |
| 4. ຊື້-ຂາຍ ລະຫວ່າງ ທທກ ດ້ວຍກັນ | 4,20 | 122,46 | 1,30 | 50,99 | | |
| 5. ທຫລ ກັບ ພາກສ່ວນ ອື່ນໆ | 0,01 | 0,05 | 0,20 | 0,00 | | |
| -ທຫລ ຊື້ຈາກ ພາກສ່ວນອື່ນໆ | 0,14 | 0,05 | 0,51 | 0,00 | | |
| -ທຫລ ຂາຍໃຫ້ພາກສ່ວນອື່ນໆ | 0,13 | 0,00 | 0,31 | 0,00 | | |

2.4 ສະພາບອັດຕາເງິນເຟີ້

ອັດຕາເງິນເຟີ້ໃນເດືອນ 10/2017 ຄາດວ່າຈະຢູ່ໃນລະດັບ 0.41% ເພີ່ມຂຶ້ນຈາກ 0.31% ໃນເດືອນ 09/2017.

2.5 ການຄຸ້ມຄອງເງິນຕາຕ່າງປະເທດ ແລະ ການສົ່ງເສີມນຳໃຊ້ເງິນກີບ

ທະນາຄານແຫ່ງ ສປປ ລາວ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເຂົ້າເງິນຕາຕ່າງປະເທດ ໃນອາທິດນີ້ຫຼຸດລົງ 76.6% ທຽບໃສ່ອາທິດຜ່ານມາ ໂດຍມີຈຳນວນ 15.9 ລ້ານໂດລາສະຫະລັດທຽບເທົ່າ. ໃນນັ້ນ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເງິນຕາຕ່າງປະເທດອອກນອກ ສປປ ລາວ ຫຼຸດລົງ 5.2% ທຽບໃສ່ອາທິດຜ່ານມາ ໂດຍມີຈຳນວນ 35.85 ລ້ານໂດລາສະຫະລັດທຽບເທົ່າ.

3. ສະພາບການເຄື່ອນໄຫວຊຳລະສະສາງຜ່ານທະນາຄານແຫ່ງ ສປປ ລາວ

ແຊັກເຄື່ອນໄຫວຜ່ານສູນຊຳລະສະສາງຂອງ ທຫລ ໃນອາທິດນີ້ ຈຳນວນ 845 ສະບັບ ທຽບໃສ່ອາທິດຜ່ານມາເພີ່ມຂຶ້ນ 107 ສະບັບ ເທົ່າກັບ 14.49% ລວມຈຳນວນເງິນທີ່ໂອນຜ່ານທັງໝົດ 385.43 ຕື້ກີບ ທຽບໃສ່ອາທິດຜ່ານມາ ເພີ່ມຂຶ້ນ 104.18 ຕື້ກີບ ເທົ່າກັບ 37.18% ເມື່ອທຽບໃສ່ອາທິດຜ່ານມາ;

ການໂອນເງິນຜ່ານລະບົບຊຳລະສະສາງແບບມູນຄ່າສູງ (RTGS) ລະຫວ່າງວັນທີ (29/09-05/10/2017) ມີທັງໝົດ 3.233 ຄັ້ງ ໃນນັ້ນປະກອບດ້ວຍ:

- ສະກຸນເງິນກີບຈຳນວນ 3.173 ຄັ້ງ ລວມມູນຄ່າການໂອນທັງໝົດໃນອາທິດ ນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເພີ່ມຂຶ້ນ 141.46 ຕື້ກີບ ຈາກ 619.74 ຕື້ກີບ ມາເປັນ 761.17 ຕື້ກີບ ເທົ່າກັບ 22.82%;

- ກະຊວງການເງິນ: ມີການເຄື່ອນໄຫວຈໍານວນ 60 ຄັ້ງ, ມູນຄ່າການໂອນໃນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າ ຫຼຸດລົງ 16.64 ຕື້ກີບ ຈາກ 18.54 ຕື້ກີບ ມາເປັນ 1.90 ຕື້ກີບ ເທົ່າກັບ 89.75%.

4. <u>ສະພາບການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ.</u>

ດັດຊະນີຕະຫຼາດຫຼັກຊັບລາວ ໃນອາທິດນີ້ ປິດຢູ່ທີ່ 1.021.91 ຈຸດ ຫຼຸດລົງ 0.67% ເມື່ອທຽບໃສ່ອາທິດຜ່ານມາ, ຕະຫຼອດອາທິດນີ້ ມີປະລິມານຊື້-ຂາຍຮຸ້ນທັງໝົດ 82.600 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 417 ຕື້ກີບ ຫຼຸດລົງ 62.48% ທຽບໃສ່ອາທິດຜ່ານມາ. ໂດຍອາທິດນີ້ ມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍ ກວມເອົາ 54.39% ຂອງມູນຄ່າການຊື້-ຂາຍທັງໝົດ.

| ຊື່ | ດັດຊະນີອາທິດທີ 25-29/09/2017 | ດັດຊະນີອາທິດທີ 02-06/10/2017 | %(ເພີ່ມຂຶ້ນ+)/(ຫຼຸດລົງ-) | ໝາຍເຫດ |
|---|---|---|---|---|
| ດັດຊະນີຕະຫຼາດຫຼັກຊັບລາວ | 1.028.84 | 1.021.91 | -0.67 | |

<u>ສະພາບການຊື້-ຂາຍຮຸ້ນຂອງຕະຫຼາດຫຼັກຊັບລາວ (LSX)</u> (ຫົວໜ່ວຍມູນຄ່າ 1.000 ກີບ)

| | ອາທິດກ່ອນ | | | ອາທິດນີ້ | | | %ປ່ຽນແປງ | | |
|---|---|---|---|---|---|---|---|---|---|
| ລາຍຊື່ | ຈໍານວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາສະເລ່ຍ (ກີບ) | ຈໍານວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາສະເລ່ຍ (ກີບ) | ຈໍານວນ (ຮຸ້ນ) | ມູນຄ່າການ ຊື້-ຂາຍ (ກີບ) | ລາຄາສະເລ່ຍ (ກີບ) |
| ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ | 125.900 | 672.350.000 | 5.340 | 16.600 | 88.720.000 | 5.345 | -86.81 | -86.80 | 4.00 |
| ບໍລິສັດຜະລິດໄຟຟ້າລາວ ມະຫາຊົນ | 78.600 | 413.870.000 | 5.266 | 59.600 | 304.510.000 | 5.109 | -24.17 | -26.42 | -156 |
| ບໍລິສັດລາວເວີນ ມະຫາຊົນ | 3.300 | 24.420.000 | 7.400 | 2.100 | 15.540.000 | 7.400 | -36.36 | -36.36 | - |
| ບໍລິສັດປີໂຕລຽມເທຣດ ດິ້ງລາວ ມະຫາຊົນ | - | - | 1.950 | 4.300 | 8.235.000 | 1.950 | - | - | - |
| ບໍລິສັດສຸວັນນີ ໂຮມເຊັນເຕີ ມະຫາຊົນ | 300 | 885.000 | 3.000 | - | - | 2.950 | -100.00 | -100.00 | -50.00 |
| ທັງໝົດ | 208.100 | 1.111.525.000 | 5.341 | 82.600 | 417.005.000 | 5.048 | -60.31 | -62.48 | |

3. ວຽກງານອື່ນໆ ທີ່ພົ້ນເດັ່ນ.

- ສໍາເລັດການເຂົ້າຮ່ວມກອງປະຊຸມ , ຈັດກອງປະຊຸມ ແລະ ສໍາມະນາຕ່າງໆ: ❶ ກອງປະຊຸມຄະນະກໍາມະການແຫ່ງຊາດ ເພື່ອຕ້ານການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍສະໄໝສາມັນ ຄັ້ງທີ III ປະຈໍາປີ 2017 ທີ່ (ທຫລ); ❷ ກອງປະຊຸມຮ່ວມກັນລະຫວ່າງ ທຫລ ແລະ ທະນາຄານທາວຽດຕິນ ທີ່ (ທຫລ); ❸ ກອງປະຊຸມຄະນະປະຈໍາສະພາແຫ່ງຊາດ ເພື່ອຜ່ານຮ່າງກົດໝາຍວ່າດ້ວຍລະບົບການຊໍາລະ ທີ່ (ທຫລ); ❹ ກອງປະຊຸມກ່ຽວກັບການປະຕິບັດໂຄງການສົ່ງເສີມການຜະລິດເປັນສິນຄ້າ ແລະ ຄໍ້າປະກັນສະບຽງອາຫານ ທີ່ ກະຊວງກະສິກໍາ ແລະ ປ່າໄມ້.

❺ ກອງປະຊຸມຄະນະຄົ້ນຄວ້າກຳນົດອັດຕາແລກປ່ຽນ ແລະ ຄຸ້ມຄອງເງິນຕາຕ່າງປະເທດ ທີ່ (ທຫລ); ❻ ກອງປະຊຸມຄະນະກຳມະການລະດັບສູງວຽກງານການເຊື່ອມໂຍງຂະແໜງການເງິນອາຊຽນ ຄັ້ງທີ 14 ທີ່ (ແຂວງ ຫຼວງພະບາງ) ແລະ ❼ ກອງປະຊຸມປຶກສາຫາລືກ່ຽວກັບການຊຸກຍູ້ສົ່ງເສີມການຜະລິດກາເຟເປັນສິນຄ້າ ທີ່ (ທຫລ);

- ສຳເລັດການຕ້ອນຮັບການເຂົ້າຂ່ຳນັບຄະນະຜູ້ອຳການ ຂອງ ທ່ານ Rufus Pinto ຜູ້ອຳນວຍການໃຫຍ່ຄົນໃໝ່ ແລະ ທ່ານ ນ. Anna Gree ຜູ້ອຳນວຍການໃຫຍ່ຄົນເກົ່າ ຈາກທະນາຄານເອເອັນແຊັດ ທີ່ (ທຫລ).

## III. ແຜນວຽກຈຸດສຸມອາທິດຕໍ່ໄປ:

- ສືບຕໍ່ດຳເນີນນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນ ທີ່ໄດ້ກຳນົດໄວ້ໃນແຜນວຽກປະຈຳປີ ເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ; ສືບຕໍ່ຕິດຕາມຢ່າງເປັນປົກກະຕິໂດຍສະເພາະຕະຫຼາດເປີດ, ອັດຕາດອກເບ້ຍ ແລະ ອັດຕາແລກປ່ຽນລະຫວ່າງທະນາຄານ; ສືບຕໍ່ຕິດຕາມການຈັດຕັ້ງປະຕິບັດນະໂຍບາຍອັດຕາດອກເບ້ຍຂອງ ທຫລ ແລະ ການສ້າງໂປູແກຼມຕິດຕາມນະໂຍບາຍດັ່ງກ່າວຢ່າງໃກ້ຊິດ;
- ກະກຽມຈັດກອງປະຊຸມ ແລະ ເຂົ້າຮ່ວມກອງປະຊຸມຕ່າງໆ: ❶ ກອງປະຊຸມສ່ອງແສງສາຍພັກ-ສາຍລັດ ປະຈຳເດືອນກັນຍາ 2017 ທີ່ (ທຫລ); ❷ ກອງປະຊຸມຮ່ວມລະຫວ່າງຄະນະປະຈຳສະພາແຫ່ງຊາດ ກັບ ຄະນະລັດຖະບານ ທີ່ (ຫສນຍ); ❸ ກອງປະຊຸມປຶກສາຫາລືແລກປ່ຽນບົດຮຽນກ່ຽວກັບວຽກງານຕະຫຼາດທຶນລະຫວ່າງ ສຳນັກງານ ຄຄຊ ແລະ ຜູ້ທີ່ມີສ່ວນຮ່ວມໃນຕະຫຼາດທຶນໃນວັນທີ 13 ຕຸລາ 2017 ທີ່ (ຕະຫຼາດຫຼັກຊັບລາວ) ແລະ ❹ ກອງປະຊຸມເຜີຍແຜ່ວຽກງານກ່ຽວກັບຫຼັກຊັບໃນຫົວຂໍ້ "ຄວາມເຂົ້າໃຈພື້ນຖານກ່ຽວກັບການລົງທຶນໃນຮຸ້ນ" ໃນລະຫວ່າງ ວັນທີ 11-13 ຕຸລາ 2017 ທີ່ (ທລກ ແລະ ສູນກາງສະຫະພັນແມ່ຍິງລາວ);
- ທ່ານຮອງຜູ້ອຳການ ທຫລ ໄດ້ເຂົ້າຮ່ວມພິທີປິດສົກຮຽນ 2016-2017 ແລະ ພິທີສະເຫຼີມສະຫຼອງວັນຄູແຫ່ງຊາດປະຈຳປີ 2017 ທີ່ (ສທຄ)
- ທ່ານຮອງຜູ້ອຳການ ທຫລ ພ້ອມດ້ວຍຄະນະກະກຽມເດີນທາງໄປເຂົ້າຮ່ວມກອງປະຊຸມປະຈຳປີຂອງ WB/IMF ທີ່ປະເທດ ສະຫະລັດອາເມລິກາ ໃນລະຫວ່າງວັນທີ 10-17 ຕຸລາ 2017.

ຫົວໜ້າຫ້ອງການ

ພັດສະຖາພອນ ແກ້ວວົງວິຈິດ